ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICE, ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ..............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2014
ສະຫງວນລິຂະສິດ

## ບົດເຝິກຫັດ

# ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

# ປຶ້ມຝຶກຫັດ

# ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາ ປີທີ 2


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ບານໃຈ ມາລາວົງ
ພູມະລີ ແສງຈັນນະວົງ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ

ພິມເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ທອງດຳ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍສິ່ງຕ່າງໆອ້ອມຕົວເຮົາເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງສິ່ງຕ່າງໆອ້ອມຕົວເຮົາມີດັ່ງນີ້:

1. ເຄື່ອງຫຼິ້ນໃນຫ້ອງຮຽນ.
2. ສຸກສາລາ ຫຼື ໂຮງໝໍ.
3. ອາຫານ.
4. ເຄື່ອງນຸ່ງຫົ່ມ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳ ໃຫ້ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


ກິດຈະກຳການຮຽນ-ການສອນໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ........ 1
ເຄື່ອງຫຼິ້ນໃນຫ້ອງຮຽນ ........ 2
ເຄື່ອງຫຼິ້ນສຳຜັດ........ 3
ບູ້ອກ........ 4
ດິນນ້ຳມັນ ຫຼື ດິນປັ້ນ........ 5
ນ້ຳ........ 6
ເຄື່ອງຫຼິ້ນບົດບາດສົມມຸດ........ 7
ເຄື່ອງຫຼິ້ນແຕ່ງຕົວ........ 8
ເຄື່ອງຫຼິ້ນຕຸກກະຕາ........ 9
ເຄື່ອງຫຼິ້ນເຄື່ອນທີ່........ 10
ສຸກສາລາ ຫຼື ໂຮງໝໍ........ 11
ເຄື່ອງໃຊ້ໃນສຸກສາລາ ຫຼື ໂຮງໝໍ........ 12
ລັກສະນະຕຽງນອນຄົນເຈັບ........ 13
ການນຳໃຊ້ຕຽງນອນຄົນເຈັບ........ 14
ລັກສະນະເຄື່ອງມືການແພດ........ 15
ການນຳໃຊ້ເຄື່ອງມືການແພດ........ 16
ຢາດົມ ແລະ ຢາທາ........ 17
ການນຳໃຊ້ຢາ........ 18
ອາຫານ........ 19
ອາຫານຫວານ........ 20
ໝາກກ້ວຍ ແລະ ເຂົ້າໜົມໄຂ່........ 21
ອາຫານຄາວ........ 22
ການຮັກສາອາຫານຄາວ ແລະ ຫວານ........ 23
ການປະຕິບັດຕົນໃນການກິນອາຫານ........ 24
ເຄື່ອງນຸ່ງຫົ່ມ........ 25
ເຄື່ອງນຸ່ງຜູ້ຊາຍ........ 26
ໂສ້ງ........ 27
ການນຸ່ງໂສ້ງ........ 28
ສິ້ນ........ 29

ກະໂປງ........................................................................................................................ 30
ການນຸ່ງສິ້ນ ແລະ ກະໂປງ................................................................................................ 31
ເສື້ອ............................................................................................................................. 32
ການນຸ່ງເສື້ອ.................................................................................................................. 33
ການຊັກເຄື່ອງນຸ່ງ ........................................................................................................ 34
ການຕາກເຄື່ອງນຸ່ງ........................................................................................................ 35
ການເກັບມ້ຽນເຄື່ອງນຸ່ງ................................................................................................. 36

# ກິດຈະກຳການຮຽນ-ການສອນ

# ໝ່ວຍສິ່ງຕ່າງໆອ້ອມຕົວເຮົາ










**ຫົວຂໍ້ການຮຽນຂອງແຕ່ລະອາທິດ ໝ່ວຍສິ່ງຕ່າງໆອ້ອມຕົວເຮົາປະກອບມີ:**

1. ເຄື່ອງຫຼິ້ນໃນຫ້ອງຮຽນ.
2. ສຸກສາລາ ຫຼື ໂຮງໝໍ.
3. ອາຫານ.
4. ເຄື່ອງນຸ່ງຫົ່ມ.

# ເຄື່ອງຫຼິ້ນໃນຫ້ອງຮຽນ



**ຫົວຂໍ້ເນື້ອໃນການຮຽນອາທິດທີ 1 ເຄື່ອງຫຼິ້ນໃນຫ້ອງຮຽນ:**

1. ເຄື່ອງຫຼິ້ນສຳຜັດ.
2. ປູອກ, ດິນນ້ຳມັນ ແລະ ນ້ຳ.
3. ເຄື່ອງຫຼິ້ນບົດບາດສົມມຸດ.
4. ເຄື່ອງຫຼິ້ນຕຸກກະຕາ.
5. ເຄື່ອນຫຼິ້ນເຄື່ອນທີ່.

# ເຄື່ອງຫຼິ້ນສຳຜັດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫຼິ້ນສຳຜັດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ໃນຫ້ອງຮຽນຂອງຫຼານມີເຄື່ອງຫຼິ້ນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຫຼິ້ນສຳຜັດມີ ບູ້ອກ, ດິນນຳມັນ, ນ້ຳ, ເຄື່ອງນຸ່ງ, ຕຸກກະຕາ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງຫຼິ້ນສຳຜັດ ໂດຍນຳໃຊ້ສີຕາມໃຈ.

# ບ້ລອກ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຮູບຮ່າງ ແລະ ສີຂອງບ້ລອກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍເຫັນບ້ລອກບໍ? ບ້ລອກມີຮູບຮ່າງ ແລະ ສີແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ບ້ລອກມີຮູບຮ່າງກ້ອນສາມແຈ, ກ້ອນສີ່ແຈ, ກ້ອນຈະຕຸລັດ ເຮັດດ້ວຍໄມ້ແຂງ ມີສີແດງ, ຟ້າ ແລະ ເຫຼືອງ.
- ໃຫ້ເດັກນ້ອຍທາສີຮູບບ້ລອກ ໂດຍນຳໃຊ້ສີແດງ, ຟ້າ ແລະ ເຫຼືອງ.

# ດິນນ້ຳມັນ ຫຼື ດິນປັ້ນ












**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງດິນນ້ຳມັນ ຫຼື ດິນປັ້ນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍຫຼິ້ນດິນນ້ຳມັນບໍ? ດິນນ້ຳມັນມີລັກສະນະແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ດິນນ້ຳມັນ ຫຼື ດິນປັ້ນມີລັກສະນະອ່ອນ, ມີສີຟ້າ, ແດງ, ເຫຼືອງ, ຂຽວ; ດິນປັ້ນ ຫຼື ດິນໜຽວ ສີເຫຼືອງ ຫຼື ສີດິນຈີ່.
- ໃຫ້ເດັກນ້ອຍທາສີຮູບດິນນ້ຳມັນ ໂດຍນຳໃຊ້ສີຕາມໃຈ.

# ນ້ຳ











**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ສີຂອງນ້ຳ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານມັກຫຼິ້ນນ້ຳບໍ? ນ້ຳມີສີແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ນ້ຳມີລັກສະນະແຫຼວ, ບໍ່ມີສີ, ຖ້າໃຫ້ມີສີຕ້ອງເອົາສີປະສົມລົງໄປຈະໄດ້ສີແດງ, ຟ້າ, ເຫຼືອງ, ຂຽວ.
- ໃຫ້ເດັກນ້ອຍທາສີຮູບນ້ຳໃນຈອກ, ຊາມ, ແກ້ວ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນບົດບາດສົມມຸດ








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫຼິ້ນບົດບາດສົມມຸດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ໃນຫ້ອງຮຽນຫຼານມີເຄື່ອງຫຼິ້ນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຫຼິ້ນບົດບາດສົມມຸດ ມີຕຸກກະຕາ, ຊຸດແຕ່ງຕົວ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງຫຼິ້ນບົດບາດສົມມຸດ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນແຕ່ງຕົວ










**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ສີເຄື່ອງຫຼິ້ນແຕ່ງຕົວ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ເຄື່ອງຫຼິ້ນໃນຮູບນີ້ໃຊ້ໄວ້ເຮັດຫຍັງ? ເປັນຫຍັງເຮົາຈຶ່ງແຕ່ງຕົວ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຫຼິ້ນສໍາລັບແຕ່ງຕົວ ມີກະເປົາ, ກະໂປງ, ແປ້ງທາ, ຫວີ, ແວ່ນ; ເຄື່ອງແຕ່ງຕົວມີສີແດງ, ຂາວ, ຟ້າ, ເຫຼືອງ, ຂຽວ.
- ໃຫ້ເດັກນ້ອຍທາສີຮູບກະເປົາ, ກະໂປງ, ແປ້ງທາ, ຫວີ, ແວ່ນ ໂດຍນໍາໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນຕຸກກະຕາ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ຈຳນວນຕຸກກະຕາໃນຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຕຸກກະຕາແຕ່ລະໂຕຊື່ວ່າແນວໃດ? ໃນຮູບນີ້ມີຕຸກກະຕາຈັກໂຕ?
- ໃຫ້ເດັກນ້ອຍສະຫຼຸບ: ຕຸກກະຕາໃນຮູບມີຕຸກກະຕາໝີ, ກະຕ່າຍ, ແມວ, ໝາ ແລະ ຄົນ.
- ໃຫ້ເດັກນ້ອຍທາສີຮູບຕຸກກະຕາ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນເຄື່ອນທີ່







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫຼິ້ນເຄື່ອນທີ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ໃນຫ້ອງຮຽນຫຼານມີເຄື່ອງຫຼິ້ນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຫຼິ້ນເຄື່ອນທີ່ ມີລົດນ້ອຍ, ເຮືອບິນນ້ອຍ, ໝາກປິ່ນ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງຫຼິ້ນເຄື່ອນທີ່ ໂດຍນຳໃຊ້ສີຕາມໃຈ.

# ສຸກສາລາ ຫຼື ໂຮງໝໍ




**ຫົວຂໍ້ເນື້ອໃນການຮຽນອາທິດທີ 2 ສຸກສາລາ ຫຼື ໂຮງໝໍ:**

1. ເຄື່ອງໃຊ້ໃນສຸກສາລາ ຫຼື ໂຮງໝໍ.
2. ລັກສະນະ ແລະ ການນຳໃຊ້ຕຽງນອນຄົນເຈັບ.
3. ລັກສະນະ ແລະ ການນຳໃຊ້ເຄື່ອງມືການແພດ.
4. ຢາດົມ ແລະ ຢາທາ.
5. ການນຳໃຊ້ຢາ.

# ເຄື່ອງໃຊ້ໃນສຸກສາລາ ຫຼື ໂຮງໝໍ










**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້ໃນສຸກສາລາ ຫຼື ໂຮງໝໍ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍໄປ ສຸກສາລາ ຫຼື ໂຮງໝໍບໍ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງໃຊ້ໃນສຸກສາລາ ຫຼື ໂຮງໝໍ ມີຕຽງນອນຄົນເຈັບ, ຢາ, ສະເຕ, ສະແລງ ແລະ ເຂັມສັກຢາ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ໃນສຸກສາລາ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະຕຽງນອນຄົນເຈັບ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຕຽງນອນຄົນເຈັບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນຕຽງນອນຄົນເຈັບບໍ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຕຽງນອນເປັນຮູບສີ່ແຈຍາວ, ມີ 4 ຂາ, ມີພື້ນເຮັດດ້ວຍເຫຼັກ ຫຼື ໄມ້, ມີລໍ້ໝູນ 4 ຕີນ.
- ໃຫ້ເດັກນ້ອຍທາສີຮູບຕຽງນອນ ໂດຍນຳໃຊ້ສີຕາມໃຈ.

# ການນຳໃຊ້ຕຽງນອນຄົນເຈັບ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຳໃຊ້ຕຽງນອນຄົນເຈັບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນຄົນເຈັບນອນ ຕຽງຢູ່ໂຮງໝໍບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການນຳໃຊ້ແມ່ນໃຊ້ສະເພາະແຕ່ຄົນເຈັບ ແລະ ນອນຕຽງລະຄົນ ໃນເວລາປິ່ນປົວ.
- ໃຫ້ເດັກນ້ອຍທາສີຮູບຕຽງ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະເຄື່ອງມືການແພດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະເຄື່ອງມືການແພດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນເຂັມສະແລງສັກຢາ ແລະ ສະເຕບໍ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະສະແລງເປັນຮູບທໍ່ກົມ, ເຂັມສັກຢາແຫຼມ ແລະ ສະເຕ ມີສາຍຍາວ.
- ໃຫ້ເດັກນ້ອຍທາສີຮູບເຂັມ, ສະແລງ ແລະ ສະເຕ ໂດຍນຳໃຊ້ສີຕາມໃຈ.

# ການນຳໃຊ້ເຄື່ອງມືການແພດ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຳໃຊ້ເຄື່ອງມືການແພດ ແລະ ຂໍ້ຄວນລະວັງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍສັກຢາບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການນຳໃຊ້ເຂັມສັກຢາໃຊ້ໄວ້ສັກຢາ ແລະ ສະເຕໃຊ້ ໄວ້ຟັງສຽງເຕັ້ນຂອງຫົວໃຈຄົນເຈັບ; ຂໍ້ຄວນລະວັງ: ສະເຕໃຊ້ແລ້ວເກັບມ້ຽນໄວ້ໃຫ້ຖືກບ່ອນ, ສ່ວນເຂັມສັກຢາໃຊ້ແລ້ວໃຫ້ຖິ້ມໃສ່ຖົງຂີ້ເຫຍື້ອ.
- ໃຫ້ເດັກນ້ອຍທາສີຮູບແພດ ແລະ ຄົນເຈັບ ໂດຍນຳໃຊ້ສີຕາມໃຈ.

# ຢາດົມ ແລະ ຢາທາ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ປະເພດຢາ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຢາທາຕຸ່ມມົດ ຫຼື ຍຸງກັດ ມີຊື່ວ່າແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຢາດົມ ແມ່ນຢາທີ່ໃຊ້ດົມແກ້ວິນວິນ ມີປະເພດເປັນນ້ຳ ແລະ ເປັນຂີ້ເຜີ້ງ, ຢາທາແມ່ນຢາທີ່ໃຊ້ທາຕຸ່ມມົດ ຫຼື ຍຸງກັດ ແມ່ນຢາມ່ອງ, ຢາທາບາດແຜແມ່ນຢາແດງ.
- ໃຫ້ເດັກນ້ອຍທາສີຮູບຢາ ໂດຍນຳໃຊ້ສີຕາມໃຈ.

# ການນຳໃຊ້ຢາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຳໃຊ້ຢາ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເວລາເປັນຫວັດຫຼານເຄີຍດື່ມຢາດື່ມບໍ? ເວລາເປັນບາດແຜໃຊ້ຢາຫຍັງທາ?
- ໃຫ້ເດັກນ້ອຍສະຫຼຸບ: ຢາແດງໃຊ້ໄວ້ປົວບາດແຜ, ຢາມ່ອງໃຊ້ໄວ້ທາຕຸ່ມມົດ ຫຼື ຍຸງກັດ, ຢາດົມໃຊ້ໄວ້ດົມແກ້ວິນວຽນ, ການນຳໃຊ້ຢາທີ່ຖືກຕ້ອງ ຄວນທາ, ດົມ ແລະ ກິນຢາຕາມແພດແນະນຳ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ອາຫານ







**ຫົວຂໍ້ເນື້ອໃນການຮຽນອາທິດທີ 3 ອາຫານ:**

1. ອາຫານຫວານ.
2. ໝາກກ້ວຍ ແລະ ເຂົ້າໜົມໄຂ່.
3. ອາຫານຄາວ.
4. ການຮັກສາອາຫານຄາວ ແລະ ຫວານ.
5. ການປະຕິບັດຕົນໃນການກິນອາຫານ.

# ອາຫານຫວານ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງອາຫານຫວານ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານຮູ້ຈັກອາຫານຫວານບໍ? ອາຫານຫວານມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຫານຫວານມີນໍ້າຫວານ, ເຂົ້າໜົມ, ໝາກໄມ້ສຸກ.
- ໃຫ້ເດັກນ້ອຍທາສີຮູບອາຫານຫວານ ໂດຍນໍາໃຊ້ສີຕາມໃຈ.

# ໝາກກ້ວຍ ແລະ ເຂົ້າໜົມໄຂ່





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກກິ່ນ, ລົດຊາດໝາກກ້ວຍ ແລະ ເຂົ້າໜົມໄຂ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໝາກກ້ວຍມີກິ່ນ ແລະ ລົດຊາດແນວໃດ? ເຂົ້າໜົມໄຂ່ມີກິ່ນ ແລະ ລົດຊາດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ໝາກກ້ວຍມີລົດຫວານປົນສົ້ມ, ກິ່ນຫອມ, ເຂົ້າໜົມໄຂ່ມີລົດຫວານ ແລະ ກິ່ນຫອມ ປະໂຫຍດຊ່ວຍໃຫ້ຮ່າງກາຍເຕີບໃຫຍ່ ແລະ ແຂງແຮງ.
- ໃຫ້ເດັກນ້ອຍທາສີຮູບໝາກກ້ວຍ ແລະ ເຂົ້າໜົມໄຂ່ ໂດຍນຳໃຊ້ສີຕາມໃຈ.

# ອາຫານລາວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງອາຫານລາວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ອາຫານລາວມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຫານລາວມີ ແກງ, ຂົ້ວ, ເອາະ, ແຈ່ວ, ມົກ, ລາບ, ຕຳສົ້ມ.
- ໃຫ້ເດັກນ້ອຍທາສີຮູບອາຫານລາວ ໂດຍນຳໃຊ້ສີຕາມໃຈ.

# ການຮັກສາອາຫານຄາວ ແລະ ຫວານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຮັກສາອາຫານຄາວ ແລະ ຫວານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນຮັກສາອາຫານແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການຮັກສາອາຫານຄາວ ແລະ ຫວານ ຄວນເກັບມ້ຽນໄວ້ບ່ອນທີ່ມີອາກາດເຢັນ ຫຼື ຕູ້ເຢັນ ແລະ ເກັບມ້ຽນໄວ້ໃນຕູ້ທີ່ມີຝາອັດ ຫຼື ໃຊ້ຝາຊີປິດໄວ້ ບໍ່ໃຫ້ແມງວັນຕອມ.
- ໃຫ້ເດັກນ້ອຍທາສີຮູບອາຫານ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການກິນອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການກິນອາຫານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເວລາກິນອາຫານຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການກິນອາຫານເວລາກິນອາຫານບໍ່ລົມກັນ, ແບ່ງປັນກັນກິນ, ຄ່ອຍຫຍ້ຳ ແລະ ເວລາດື່ມນ້ຳຄ່ອຍໆກິນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ອາຫານ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງຫົ່ມ



**ຫົວຂໍ້ເນື້ອໃນການຮຽນອາທິດທີ 4 ເຄື່ອງນຸ່ງຫົ່ມ:**

1. ເຄື່ອງນຸ່ງຜູ້ຊາຍ ແລະ ແມ່ຍິງ.
2. ໂສ້ງ ແລະ ການນຸ່ງໂສ້ງ.
3. ສິ້ນ ແລະ ກະໂປງ.
4. ເສື້ອ ແລະ ການນຸ່ງເສື້ອ.
5. ການຊັກ, ຕາກເຄື່ອງນຸ່ງ ແລະ ເກັບມ້ຽນເຄື່ອງນຸ່ງ.

# ເຄື່ອງນຸ່ງຜູ້ຊາຍ ແລະ ແມ່ຍິງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງເຄື່ອງນຸ່ງຜູ້ຊາຍ ແລະ ແມ່ຍິງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງນຸ່ງທີ່ຫຼານເຫັນໃນຮູບມີຊື່ວ່າແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງນຸ່ງຜູ້ຊາຍ ມີໂສ້ງຂາສັ້ນ, ຂາຍາວ, ເສື້ອແຂນສັ້ນ, ແຂນຍາວ, ເຄື່ອງນຸ່ງແມ່ຍິງມີສິ້ນ, ກະໂປງ, ເສື້ອແຂນສັ້ນ ແລະ ແຂນຍາວ.
- ໃຫ້ເດັກນ້ອຍທາສີຮູບໂສ້ງ, ສິ້ນ, ກະໂປງ ແລະ ເສື້ອ ໂດຍນຳໃຊ້ສີຕາມໃຈ.

# ໂສ້ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງໂສ້ງຂາສັ້ນ ແລະ ຂາຍາວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານມີໂສ້ງຂາສັ້ນ ແລະ ໂສ້ງຂາຍາວບໍ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງໂສ້ງ ມີໂສ້ງຂາສັ້ນ, ຂາຍາວ ມີຫົວໂສ້ງ, ຂໍເກາະໂສ້ງ, ຊິບໂສ້ງ, ຖົງໂສ້ງ, ຜ້າທີ່ໃຊ້ຕັດໂສ້ງ ມີຜ້າບາງ ແລະ ໜາ.
- ໃຫ້ເດັກນ້ອຍທາສີຮູບໂສ້ງຂາສັ້ນ ແລະ ຂາຍາວ ໂດຍນຳໃຊ້ສີຕາມໃຈ.

# ການນຸ່ງໂສ້ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຸ່ງໂສ້ງ ແລະ ການນໍາໃຊ້ໂສ້ງຂາຍາວ ແລະ ຂາສັ້ນ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານມີໂສ້ງຂາຍາວບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການນຸ່ງໂສ້ງຂາສັ້ນ ແລະ ຂາຍາວ; ນຸ່ງຖືກຕາມລະດູການ ໂສ້ງຂາສັ້ນໃຊ້ນຸ່ງຍາວຮ້ອນ, ໂສ້ງຂາຍາວໃຊ້ນຸ່ງຍາວໜາວ; ນຸ່ງໂສ້ງໃຫ້ເໝາະກັບຮ່າງກາຍຂອງຕົນເອງ ເວລານຸ່ງໂສ້ງທີ່ມີຂໍເກາະ ແລະ ຊິບໂສ້ງ ຄວນເກາະ ຫຼື ຮີດຄ່ອຍໆ.
- ໃຫ້ເດັກນ້ອຍທາສີເດັກນ້ອຍນຸ່ງໂສ້ງ ໂດຍນໍາໃຊ້ສີຕາມໃຈ.

# ສິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງສິ້ນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນໃຜນຸ່ງສິ້ນ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງສິ້ນ ມີຫົວ, ມີຕີນຈົກທີ່ມີຫຼາຍສີ, ຫຼາຍລວດລາຍເຮັດດ້ວຍຝ້າຍ ຫຼື ໄໝ ໜາ ຫຼື ບາງ.
- ໃຫ້ເດັກນ້ອຍທາສີຮູບສິ້ນ ໂດຍນຳໃຊ້ສີຕາມໃຈ.

# ກະໂປງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງກະໂປງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນໃຜນຸ່ງກະໂປງບໍ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງກະໂປງ ມີຫົວ, ບໍ່ມີຕີນ, ສັ້ນ ແລະ ຍາວ ເຮັດດ້ວຍຜ້າບາງ ຫຼື ໜາ ມີຫຼາຍສີ.
- ໃຫ້ເດັກນ້ອຍທາສີຮູບກະໂປງ ໂດຍນຳໃຊ້ສີຕາມໃຈ.

# ການນຸ່ງສິ້ນ ແລະ ກະໂປງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຸ່ງສິ້ນ ແລະ ກະໂປງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນໃຜນຸ່ງສິ້ນ ແລະ ກະໂປງບໍ?
- ໃຫ້ເດັກນ້ອຍສະຫຼຸບ: ສິ້ນແມ່ນເຄື່ອງນຸ່ງແມ່ຍິງລາວ ໃຊ້ນຸ່ງຢູ່ເຮືອນ, ໄປໂຮງຮຽນ, ໄປວັດ ແລະ ໄປງານບຸນຕ່າງໆ ສິ້ນທີ່ມີຂໍເກາະຄວນນຸ່ງໃຫ້ຖືກເບື້ອງ, ຖືກເກາະຂໍ, ສ່ວນກະໂປງຄ້າຍຄືສິ້ນ ຖ້າມີຊິບ ຫຼື ຂໍເກາະ ຄວນຄ່ອຍໆຮຶດຊິບ ຫຼື ເກາະຂໍ.
- ໃຫ້ເດັກນ້ອຍທາສີຮູບສິ້ນ ແລະ ກະໂປງ ໂດຍນຳໃຊ້ສີຕາມໃຈ.

# ເສື້ອ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງເສື້ອ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານມີເສື້ອຄືໃນຮູບນີ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງເສື້ອ ມີແຂນສັ້ນ, ແຂນຍາວ, ຄໍມົນ, ຄໍຕັ້ງ, ກະດຸມແຕບ, ກະດຸມມີຮູ ຜ້າທີ່ນໍາມາຕັດເສື້ອ ມີຜ້າບາງ ແລະ ໜາ.
- ໃຫ້ເດັກນ້ອຍທາສີຮູບເສື້ອ ໂດຍນໍາໃຊ້ສີຕາມໃຈ.

# ການນຸ່ງເສື້ອ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຸ່ງເສື້ອ, ການນໍາໃຊ້ເສື້ອແຂນສັ້ນ ແລະ ແຂນຍາວ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານມີເສື້ອແຂນຍາວ ແລະ ແຂນສັ້ນບໍ? ການນຸ່ງເສື້ອຄວນເຮັດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການນຸ່ງເສື້ອແຂນສັ້ນ ແລະ ແຂນຍາວ; ນຸ່ງຖືກລະດູການ ເສື້ອແຂນສັ້ນໃຊ້ນຸ່ງໃນຍາມຮ້ອນ, ເສື້ອແຂນຍາວໃຊ້ນຸ່ງໃນຍາມໜາວ, ເວລານຸ່ງເສື້ອທີ່ມີກະດຸມແຕບ ຫຼື ກະດຸມມີຮູຄວນໃສ່ດຸມໃຫ້ຖືກຄູ່.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍນຸ່ງເສື້ອ ໂດຍນໍາໃຊ້ສີຕາມໃຈ.

# ການຊັກເຄື່ອງນຸ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຊັກເຄື່ອງນຸ່ງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຊັກເຄື່ອງນຸ່ງຊ່ວຍແມ່ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງນຸ່ງຫຼັງຈາກນຸ່ງແລ້ວ ຕ້ອງຊັກເຄື່ອງໃຫ້ສະອາດ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຊັກເຄື່ອງນຸ່ງ ໂດຍນຳໃຊ້ສີຕາມໃຈ.

# ການຕາກເຄື່ອງນຸ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຕາກເຄື່ອງນຸ່ງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຕາກເຄື່ອງນຸ່ງຊ່ວຍແມ່ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງນຸ່ງຫຼັງຈາກຊັກແລ້ວ ຕ້ອງຕາກເຄື່ອງໃຫ້ແຫ້ງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຕາກເຄື່ອງນຸ່ງ ໂດຍນຳໃຊ້ສີຕາມໃຈ.

# ການເກັບມ້ຽນເຄື່ອງນຸ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເກັບມ້ຽນເຄື່ອງນຸ່ງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍມ້ຽນເຄື່ອງຕົນເອງບໍ? ຄວນມ້ຽນເຄື່ອງນຸ່ງໄວ້ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງນຸ່ງຫຼັງຈາກຕາກແຫ້ງແລ້ວ ຕ້ອງພັບ ແລະ ເກັບມ້ຽນໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍເກັບມ້ຽນເຄື່ອງນຸ່ງ ໂດຍນຳໃຊ້ສີຕາມໃຈ.